ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 5584 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 18 ກັນຍາ 2025

# ຂໍ້ຕົກລົງ
# ວ່າດ້ວຍ ຊຸດເຄື່ອງແບບກິລາ-ກາຍຍະກຳ

- ອີງຕາມ ກົດໝາຍວ່າດ້ວຍ ກິລາ-ກາຍຍະກຳ (ສະບັບປັບປຸງ) ສະບັບເລກທີ 74 /ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບ ເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກົມກິລາລະດັບສູງ ສະບັບເລກທີ 552/ກສ, ລົງວັນທີ 25 ສິງຫາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ ຊຸດເຄື່ອງແບບກິລາ-ກາຍຍະກຳ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມເອກະພາບ ແນໃສ່ເຮັດໃຫ້ມີເອກະລັກ, ສະແດງເຖິງຮີດຄອງປະເພນີອັນດີງາມຂອງຊາດ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ໃນການເຂົ້າຮ່ວມການເຄື່ອນໄຫວວຽກງານກິລາ-ກາຍຍະກຳ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 2 ຊຸດເຄື່ອງແບບກິລາ-ກາຍຍະກຳ

ຊຸດເຄື່ອງແບບກິລາ-ກາຍຍະກຳ ແມ່ນຊຸດເຄື່ອງແບບທີ່ນຳໃຊ້ເຂົ້າໃນພິທີທາງການ, ການແຂ່ງຂັນ ແລະ ການເຄື່ອນໄຫວວຽກງານກິລາ-ກາຍຍະກຳ ທັງພາຍໃນ ແລະ ຕ່າງປະເທດ.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຄະນະບໍລິຫານງານກິລາ ແລະ ຄະນະກິລາທີມຊາດ ທີ່ເຄື່ອນໄຫວວຽກງານ ກິລາ-ກາຍຍະກຳ ທັງພາຍໃນ ແລະ ຕ່າງປະເທດ.



Scanned with CamScanner

## ໝວດທີ 2
## ປະເພດ ຊຸດເຄື່ອງແບບກິລາ-ກາຍຍະກຳ

**ມາດຕາ 4  ປະເພດຊຸດເຄື່ອງແບບກິລາ-ກາຍຍະກຳ**

ຊຸດເຄື່ອງແບບກິລາ-ກາຍຍະກຳ ມີ 6 ປະເພດ ດັ່ງນີ້:

1. ຊຸດສາກົນ;
2. ຊຸດປະຈຳຊາດ;
3. ຊຸດວອມ ແລະ ເສື້ອຍືດ;
4. ຊຸດນຳໃຊ້ສຳລັບການແຂ່ງຂັນ;
5. ຊຸດບຸກຄະລາກອນກິລາ-ກາຍຍະກຳ;
6. ຊຸດເຄື່ອງແບບສະຫະພັນກິລາແຫ່ງຊາດ.

**ມາດຕາ 5  ຊຸດສາກົນ**

ຊຸດສາກົນ ມີຮູບແບບ ດັ່ງນີ້:

1. ຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ: ເທິງໜ້າເອິກເບື້ອງຊ້າຍ ມີເຄື່ອງໝາຍຄະນະກຳມະການໂອແລມປິກແຫ່ງຊາດລາວ ກາບ້ວງ 5 ບ້ວງ ປະກອບມີ 5 ສີ ດັ່ງນີ້: ສີຟ້າ, ສີດຳ, ສີແດງ, ສີເຫຼືອງ ແລະ ສີຂຽວ ຢູ່ດ້ານລຸ່ມຂອງຮູບທຸງຊາດ;

2. ຄະນະກຳມະການກິລາພາຣາແລມປິກແຫ່ງຊາດລາວ: ເທິງໜ້າເອິກເບື້ອງຊ້າຍ ມີເຄື່ອງໝາຍຄະນະກຳມະການພາຣາແລມປິກແຫ່ງຊາດລາວ ເປັນກາໝາຍທຸງຊາດລາວຢູ່ດ້ານເທິງ ແລະ ມີ 3 ຂີດ ປະກອບມີ 3 ສີ ດັ່ງນີ້: ສີແດງ, ສີຟ້າ ແລະ ສີຂຽວ ຢູ່ດ້ານລຸ່ມຂອງຮູບທຸງຊາດ;

3. ບຸກຄະລາກອນກິລາ-ກາຍຍະກຳ: ເທິງໜ້າເອິກເບື້ອງຊ້າຍ ມີເຄື່ອງໝາຍກິລາ-ກາຍຍະກຳ ເປັນຮູບທອນໄຟ, ສີແດງກອມຫົວນາກສີດຳ, ມີສັນຍາລັກທາງແລ່ນຢູ່ເບື້ອງລຸ່ມ, ມີໜັງສືເປັນພາສາຝຣັ່ງ “LAOS”;

4. ບຸກຄະລາກອນສະຫະພັນກິລາແຫ່ງຊາດ: ເທິງໜ້າເອິກເບື້ອງຊ້າຍ ມີເຄື່ອງໝາຍສະຫະພັນກິລາ ເປັນຮູບກາໝາຍສະເພາະຂອງສະຫະພັນກິລາ, ສັນຍະລັກຂອງປະເພດກິລາ, ມີໜັງສືເປັນພາສາລາວ ແລະ ພາສາສາກົນ.

**ມາດຕາ 6  ຊຸດບຸກຄະລາກອນກິລາ-ກາຍຍະກຳ**

ຊຸດບຸກຄະລາກອນກິລາ-ກາຍຍະກຳ ມີຮູບແບບ ດັ່ງນີ້:

1. ຊຸດບຸກຄະລາກອນກິລາ-ກາຍຍະກຳ ເທິງໜ້າເອິກເບື້ອງຊ້າຍມີເຄື່ອງໝາຍກິລາ-ກາຍຍະກຳ;
2. ເສື້ອເຊີດແຂນຍາວສີຟ້າອ່ອນ (ຊາຍ-ຍິງ);
3. ໂສ້ງຂາຍາວສີດຳ (ຊາຍ);
4. ຜ້າສິ້ນ ແລະ ຕີນສິ້ນເປັນສີຟ້າແກ່ (ຍິງ);
5. ກາລະວັດສີຟ້າແກ່ (ຊາຍ).

ສຳລັບສີຊຸດບຸກຄະລາກອນກິລາ-ກາຍຍະກຳ ຈະມີການປ່ຽນແປງໃນແຕ່ລະໄລຍະ.



Scanned with CamScanner

### ມາດຕາ 7 ຊຸດບຸກຄະລາກອນສະຫະພັນກິລາແຫ່ງຊາດ

ຊຸດບຸກຄະລາກອນສະຫະພັນກິລາແຫ່ງຊາດ ມີຮູບແບບ ດັ່ງນີ້:

1. ຊຸດບຸກຄະລາກອນສະຫະພັນກິລາແຫ່ງຊາດ ເທິງໜ້າເອິກເບື້ອງຊ້າຍມີກາໝາຍຂອງສະຫະພັນ;
2. ເສື້ອເຊີດແຂນຍາວບໍ່ຈຳກັດສີ (ຊາຍ-ຍິງ);
3. ໂສ້ງຂາຍາວສີດຳ ຫຼື ສີກົມ (ຊາຍ);
4. ຜົນສິ້ນ ແລະ ຕີນສິ້ນບໍ່ຈຳກັດສີ (ຍິງ);
5. ກາລະວັດບໍ່ຈຳກັດສີ (ຊາຍ).

### ມາດຕາ 8 ຊຸດປະຈຳຊາດ

ຊຸດປະຈຳຊາດ ທີ່ໃສ່ເຂົ້າໃນພິທີທາງການ ກິລາ-ກາຍຍະກຳ ມີຮູບແບບ ດັ່ງນີ້:

1. ຊຸດປະຈຳຊາດ ສຳລັບເພດຊາຍ

   1.1 ເສື້ອ

   - ແພເສື້ອ: ແພໄໝ ຫຼື ແພຝ້າຍ ທີ່ເປັນຜະລິດຕະພັນຂອງລາວ;
   - ຄໍເສື້ອ: ຄໍຕັ້ງປິດ ຫຼື ເຊີດ;
   - ແຂນເສື້ອ: ແຂນຍາວຊີງກະບອກຕິດກະດຸມສາມເມັດຢູ່ປາຍແຂນເສື້ອ;
   - ສີເສື້ອ: ບໍ່ຈຳກັດສີ;
   - ຖົງເສື້ອ: ເປັນຖົງເຈາະຢູ່ເທິງເບື້ອງຊ້າຍ ໜຶ່ງຖົງບໍ່ມີຝາປິດ ມີຖົງເສື້ອດ້ານລຸ່ມສອງຖົງ ມີຝາປິດ;
   - ກະດຸມເສື້ອ: ຫ້າ ຫາ ເຈັດ ເມັດ;
   - ດ້ານຫຼັງຂອງເສື້ອ: ແຈກເປັນສອງເບື້ອງ.

   1.2 ໂສ້ງ

   - ແພໂສ້ງ: ສີດຳ ແລະ ສີມືດ;
   - ໂສ້ງ: ຂາຍາວຊີງກະບອກ.

   1.3 ແພຂາວມ້າ

   - ແພຂາວມ້າ ລາຍສີຂາວ-ດຳ.

   1.4 ເກີບ

   - ຂັດມັນສີດຳ ແລະ ຖົງເທົ້າດຳ.

2. ຊຸດປະຈຳຊາດ ສຳລັບເພດຍິງ

   2.1 ເສື້ອ

   - ແພເສື້ອ: ແພໄໝລາວ ຫຼື ແພຝ້າຍ ທີ່ເປັນຜະລິດຕະພັນຂອງລາວ;
   - ສີເສື້ອ: ບໍ່ຈຳກັດ;
   - ຄໍເສື້ອ: ຂະໜາດສີ່ ຫາ ເຈັດ ຊັງຕີແມັດ, ຄໍປ້າຍໃສ່ແຂບ ປ້າຍຂວາ ຫາ ຊ້າຍ, ຕ່ຳ ຫຼື ປັກແສ່ວ ດ້ວຍຝ້າຍ ຫຼື ໄໝ ແລະ ຕິດກະດຸມ ທີ່ມີສີກົມກືນກັບສີແພເສື້ອ ສາມເມັດ ຢູ່ປ້າຍແຂບເສື້ອ;
   - ແຂນເສື້ອ: ແຂນຍາວຊີງກະບອກ ຍາວກາຍແຂນສອກເຖິງຂໍ້ແຂນ.

2.2 ສິ້ນ

- ຜືນສິ້ນ: ມີຫົວສິ້ນ ແລະ ມີຕີນສິ້ນ;
- ສິ້ນຝ້າຍ ແລະ ສິ້ນໄໝ ລາຍຈົກ, ລາຍຂິດ, ລາຍຂັ້ນ ແລະ ລາຍອື່ນໆ ຕາມຄວາມເໝາະສົມ;
- ຕີນສິ້ນ ຂະໜາດ ສິບແປດ ຫາ ຊາວຫ້າ ຊັງຕີແມັດ ສີກົມກືນກັບຜືນສິ້ນ.

2.3 ແພບ່ຽງ

ແພບ່ຽງລາຍຫັດຖະກຳລາວ ເປັນຊຸດກົມກືນກັບຜືນສິ້ນ ຂະໜາດລວງຍາວ ສອງຮ້ອຍຊາວ ຫາ ສອງຮ້ອຍຊາວຫ້າ ຊັງຕີແມັດ, ລວງກ້ວາງ ສາມສິບຫົກ ຫາ ສີ່ສິບ ຊັງຕີແມັດ.

2.4 ເກີບ

- ເກີບ: ເກີບສຸບ ປິດສົ້ນ ປິດປາຍ ມີສົ້ນ, ສີດຳ, ສີນ້ຳຕານ ຫຼື ສີອື່ນ ທີ່ກົມກືນກັບເຄື່ອງນຸ່ງ.

**ມາດຕາ 9 ຊຸດວອມ ແລະ ເສື້ອຢືດ ເຂົ້າຮ່ວມການແຂ່ງຂັນ**

ຊຸດວອມ ແລະ ເສື້ອຢືດ ເຂົ້າຮ່ວມການແຂ່ງຂັນ ມີໂທນສີທຸງຊາດລາວ ດັ່ງນີ້:

1. ຊຸດວອມ: ເທິງໜ້າເອິກເບື້ອງຊ້າຍ ມີຮູບທຸງຊາດ, ດ້ານຫຼັງຂອງເສື້ອມີໜັງສືເປັນພາສາຝຣັ່ງ "LAOS" ໂທນສີ ຂາວ-ຟ້າ-ແດງ;

2. ເສື້ອຢືດ: ເທິງໜ້າເອິກເບື້ອງຊ້າຍ ມີຮູບທຸງຊາດ, ດ້ານຫຼັງຂອງເສື້ອມີໜັງສື ເປັນພາສາຝຣັ່ງ "LAOS" ໂທນສີ ຂາວ-ຟ້າ-ແດງ.

ສຳລັບແບບລວດລາຍຂອງເຄື່ອງນຸ່ງ ແມ່ນໃຫ້ອອກແບບໃຫ້ໃກ້ຄຽງກັບກາໝາຍ ແລະ ເອກະລັກຂອງງານແຂ່ງຂັນ.

**ມາດຕາ 10 ຊຸດນຳໃຊ້ສຳລັບການແຂ່ງຂັນກິລາ.**

ຊຸດນຳໃຊ້ສຳລັບການແຂ່ງຂັນກິລາ ມີຮູບແບບ ດັ່ງນີ້ :

1. ຊຸດນຳໃຊ້ສຳລັບການແຂ່ງຂັນ ບາງປະເພດກິລາ ສາມາດກຳນົດຕາມລະບຽບຫຼັກການ ຂອງສະຫະພັນກິລາທີ່ກ່ຽວຂ້ອງເປັນຕົ້ນ: ກິລາ ບານເຕະ, ບານສົ່ງ, ບານບ້ວງ, ກະຕໍ້ ແລະ ອື່ນໆ;

2. ຊຸດນຳໃຊ້ສຳລັບການແຂ່ງຂັນ ບາງປະເພດກິລາທີ່ມີການກຳນົດຊຸດແຂ່ງຂັນສະເພາະຂອງສະຫະພັນກິລາ ເປັນຕົ້ນ: ກິລາ ຢູໂດ, ເທຄວັນໂດ, ປັນຈັກສີລັດ ແລະ ອື່ນໆ;

3. ການຕິດຮູບທຸງຊາດລາວ ແລະ ມີໜັງສືເປັນພາສາຝຣັ່ງ "LAOS" ຕ້ອງອີງໃສ່ລະບຽບກະຕິກາ ຂອງແຕ່ລະປະເພດກິລາ.

**ມາດຕາ 11 ການກຳນົດຂະໜາດ ຂອງຮູບທຸງຊາດ ແລະ ຕົວໜັງສື**

ການກຳນົດຂະໜາດ ຂອງຮູບທຸງຊາດ ແລະ ຕົວໜັງສື ມີດັ່ງນີ້:

1. ຮູບທຸງຊາດ ຢູ່ເທິງໜ້າເອິກເບື້ອງຊ້າຍ ມີຂະໜາດ ຫ້າຈຸດຫ້າ ຊັງຕີແມັດ ຄູນ ສາມຈຸດຫ້າ ຊັງຕີແມັດ, ເຈັດຈຸດຫ້າ ຊັງຕີແມັດ ຄູນ ສີ່ຈຸດຫ້າ ຊັງຕີແມັດ;

2. ຕົວໜັງສື LAOS ມີຂະໜາດ ສິບເກົ້າ ຊັງຕີແມັດ ຄູນ ຫົກ ຊັງຕີແມັດ.



Scanned with CamScanner

## ໝວດທີ 3
## ການຄຸ້ມຄອງ ແລະ ການນຳໃຊ້ ຊຸດເຄື່ອງແບບກິລາ-ກາຍຍະກຳ

**ມາດຕາ 12 ການຄຸ້ມຄອງຊຸດເຄື່ອງແບບກິລາ-ກາຍຍະກຳ**

ກົມກິລາລະດັບສູງ ແລະ ກົມກິລາມວນຊົນ, ພະລະ ແລະ ສິປະລະສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄຸ້ມຄອງ ການນຳໃຊ້ຊຸດເຄື່ອງແບບກິລາ-ກາຍຍະກຳ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ຄະນະກຳມະການໂອແລມປິກແຫ່ງຊາດລາວ, ຄະນະກຳມະການພາຣາແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ, ສະຫະພັນກິລາມະຫາວິທະຍາໄລລາວ, ສະຫະພັນກິລານັກຮຽນສາມັນລາວ, ສະມາຄົມກິລາ-ກາຍຍະກຳ, ສະໂມສອນກິລາ-ກາຍຍະກຳ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 13 ການນຳໃຊ້ຊຸດເຄື່ອງແບບກິລາ-ກາຍຍະກຳ**

ການນຳໃຊ້ຊຸດເຄື່ອງແບບກິລາ-ກາຍຍະກຳ ມີດັ່ງນີ້:

1. ຊຸດສາກົນ ໃຫ້ນຳໃຊ້ເຂົ້າໃນງານພິທີທາງການ ທັງພາຍໃນ ແລະ ຕ່າງປະເທດ;
2. ຊຸດປະຈຳຊາດ ໃຫ້ນຳໃຊ້ໃນພິທີທາງການ, ພິທີເປີດງານແຂ່ງຂັນກິລາ ໃນລະດັບພາກພື້ນ ແລະ ສາກົນທີ່ໄດ້ຮັບການອະນຸມັດຈາກລັດຖະບານ;
3. ຊຸດເຄື່ອງແບບຄະນະກຳມະການໂອແລມປິກແຫ່ງຊາດລາວ, ຄະນະກຳມະການພາລາແລມປິກແຫ່ງຊາດລາວ, ບຸກຄະລາກອນກິລາ-ກາຍຍະກຳ ແລະ ສະຫະພັນກິລາແຫ່ງຊາດ ໃຫ້ນຳໃຊ້ໃນການເຄື່ອນໄຫວວຽກງານກິລາ-ກາຍຍະກຳ ຫຼື ພິທີການຕ່າງໆ;
4. ຊຸດວອມ, ເສື້ອຍືດ ແລະ ຊຸດແຂ່ງຂັນ ຂອງນັກກິລາທີມຊາດ ໃຫ້ນຳໃຊ້ໃນການເຄື່ອນໄຫວກິດຈະກຳການແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ ທີ່ໄດ້ຮັບການອະນຸມັດຈາກລັດຖະບານ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 14 ຂໍ້ຫ້າມ ການນຳໃຊ້ຊຸດເຄື່ອງແບບກິລາ-ກາຍຍະກຳ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ຊຸດເຄື່ອງແບບກິລາ-ກາຍຍະກຳ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ແລະ ມາດຕາ 10 ເຂົ້າຮ່ວມພິທີການອື່ນໆ ທີ່ບໍ່ກ່ຽວຂ້ອງ ຫຼື ບໍ່ໄດ້ຮັບການອະນຸຍາດຈາກກະຊວງສຶກສາທິການ ແລະ ກິລາ;
2. ຊຸດເຄື່ອງແບບກິລາ-ກາຍຍະກຳ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ແລະ ມາດຕາ 10 ເຂົ້າໃນສະຖານທີ່ທີ່ບໍ່ເໝາະສົມ ເຮັດໃຫ້ເສື່ອມເສຍຊື່ສຽງກິລາລາວ;
3. ນຳໃຊ້ຮູບທຸງຊາດ ແລະ ໜັງສືເປັນພາສາຝຣັ່ງ "LAOS" ໃສ່ໃນຊຸດເຂົ້າຮ່ວມການແຂ່ງຂັນກິລາລະດັບຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກະຊວງສຶກສາທິການ ແລະ ກິລາ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.



Scanned with CamScanner

**ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ຄະນະບໍລິຫານງານກິລາ, ຄະນະກິລາທົ່ມຊາດ ແລະ ການຈັດຕັ້ງກິລາ-ກາຍຍະກໍາທາງສັງຄົມ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມກິລາລະດັບສູງ ແລະ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຫ້ອງການ, ກົມ, ອົງການທຽບເທົ່າກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ, ສະຖານການສຶກສາ, ການຈັດຕັ້ງກິລາ-ກາຍຍະກໍາທາງສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ 29 ກັນຍາ 2025 ເປັນຕົ້ນໄປ.

ເປັນແທນ ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ ★ ລັດຖະມົນຕີ ★

ປອ. ສໍາລານ ພັນຄະວົງ



Scanned with CamScanner